ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ເອກະສານລາຍງານການເງິນລວມກິດຈະການ

ສຳລັບໄລຍະປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

EY

Building a better working world

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະອຳນວຍການ	4
ບົດລາຍງານຂອງນັກກວດສອບອິດສະຫຼະ	5 - 6
ໃບລາຍງານຖານະການເງິນລວມກິດຈະການ	7 - 8
ໃບລາຍງານຂັ້ນການດຳເນີນງານລວມກິດຈະການ	9
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງລວມກິດຈະການ	10
ໃບລາຍງານກະແສເງິນສົດລວມກິດຈະການ	11 - 12
ບົດອະທິບາຍຊໍ້ອນຫ້ອຍຂອກະສານລາຍງານການເງິນລວມກິດຈະການ	13 - 36

ຂໍ້ມູນທົ່ວໄປ

ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ("ບໍລິສັດ") ຊື່ເດີມແມ່ນ ບໍລິສັດ ຊີມັ່ງລາວ ມະຫາຊົນ ແລະ ບໍລິສັດ ຊີມັ່ງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບໝາຍໃນຂອງບໍລິສັດທີ່ເຊັນຍັອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ວັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ກັບ ບໍລິສັດຮ່ວມມືລາທົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການຄ້າ, ເຊິ່ງ ບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊີມັ່ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊີມັ່ງເພື່ອການຈຳໜ່າຍພາຍໃນ ແລະ ສົ່ງອອກ.

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜ່ານຄຳເວົ້າການອອກຈຳໜ່າຍຮຸ້ນໃຫ້ແກ່ສາທາລະນະຄັ້ງທຳອິດ (IPO) ເລກທີ 008/ຄລຮລ ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຮຸ້ນຕໍ່ສາທາລະນະ ໂດຍມີຮຸ້ນຂອງບໍລິສັດ ຈຳນວນ 40,004,000 ຮຸ້ນ (ພາຍໃຕ້ຊື່ຫຍໍ້ "LCTC") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວ.

ວັນທີ 20 ກຸມພາ 2018, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດ ເລກທີ 0160/ຈທລ ສຳຫຼັບການປ່ຽນຊື່ ຂອງບໍລິສັດຈາກ ບໍລິສັດ ຊີມັ່ງລາວ ຈຳກັດ ມາເປັນ ບໍລິສັດ ຊີມັ່ງລາວ ມະຫາຊົນ.

ວັນທີ 2 ພຶດສະພາ 2023, ບໍລິສັດໄດ້ຮັບໃບອະນຸຍາດລົງທຶນສະບັບໃໝ່ ເລກທີ 119.2023/ກຜທ, ອອກໂດຍ ກະຊວງແຜນການ ແລະ ການລົງທຶນ ເຊິ່ງປ່ຽນແປງກິດຈະກຳຫຼັກທາງທຸລະກິດຂອງບໍລິສັດ. ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກການຜະລິດ, ການຂາຍສົ່ງ ແລະ ການຂາຍຍ່ອຍຊີມັ່ງ ແລະ ຜະລິດຕະພັນຊີມັ່ງອື່ນໆທີ່ກ່ຽວຂ້ອງ ມາເປັນການໃຫ້ບໍລິການການທ່ອງທ່ຽວ (ພາຍໃນ ແລະ ຕ່າງປະເທດ) ແລະ ການກໍ່ສ້າງຕຶກອາຄານຄອນໂດມາໄວ້ຈຳໜ່າຍ.

ວັນທີ 31 ຕຸລາ 2023, ບໍລິສັດໄດ້ຮັບໃບທະບຽນວິສາຫະກິດສະບັບລ່າສຸດ ເລກທີ 3331/ຈທລ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດສຳຫຼັບການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊີມັ່ງລາວ ມະຫາຊົນ ມາເປັນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.

ໂຄງສ້າງການຖືຮຸ້ນຂອງບໍລິສັດ ນະວັນທີ 31 ທັນວາ 2024 ມີລາຍລະອຽດດັ່ງນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ເປີເຊັນ*
Yunnan Hengshi Chengrui Holdings Co., Ltd (ກ່ອນໜ້ານີ້ແມ່ນໃນນາມ Yunnan Qianhan Technology Network Limited ("Yunnan Qianhan")	14,280,000	35.696%
ວັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	13,720,000	34.297%
ບໍລິສັດ ຫຼັກຊັບລາວ - ຈີນ ຈຳກັດ (LCS)	7,547,800	18.868%
ບໍລິສັດ ມະຫາຊົນ ແລະ ນັກລົງທຶນ ອື່ນໆ	4,456,200	11.139%
	40,004,000	

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງກຸ່ມບໍລິສັດຕັ້ງຢູ່ ບ້ານໂພນທະເນັກ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດ ຍັງມີໂຮງງານຊີມັ່ງວັງວຽງ ຫຼັກ 2 ຢູ່ເມືອງວັງວຽງ, ແຂວງ ວຽງຈັນ, ສປປ ລາວ.

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2024 ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ເນັຍ ເຫຼຍ	ປະທານ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ວັນທອງ ລິດທິກຸນ	ຮອງປະທານ	ແຕ່ງຕັ້ງນະວັນທີ 23 ມີຖຸນາ 2020
ທ່ານ ສິນທະນຸ ສິນສອງບຸດາຕະຣັນ	ຮອງປະທານ	ແຕ່ງຕັ້ງນະວັນທີ 28 ມີຖຸນາ 2024
ທ່ານ ຈ່າງ ຈິ່ງຕົວ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານນາງ ຊ້ຳຍ ຫລິງຫລິງ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຕິ໋ງ ເຊິ່ນຮຸ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຕິ໋ງ ຢຸ໋ຕິ໋ງ	ສະມາຊິກ	ແຕ່ງຕັ້ງນະວັນທີ 05 ພະຈິກ 2024
ທ່ານ ນາງ ລີ ປຸ່ຫົງ	ສະມາຊິກ	ແຕ່ງຕັ້ງນະວັນທີ 28 ສິງຫາ 2024
ທ່ານ ຄຳບົນ ໄຊເລົ່າວົງ	ສະມາຊິກ	ແຕ່ງຕັ້ງນະວັນທີ 23 ທັນວາ 2020
ທ່ານ ໄຕ ຫຼົ່ງຫົວ	ສະມາຊິກອິດສະຫຼະ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຫລິ ຂ້າວ	ສະມາຊິກອິດສະຫຼະ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ວິງວິຈິດ ແກ້ວວິງກິດ	ສະມາຊິກອິດສະຫຼະ	ແຕ່ງຕັ້ງນະວັນທີ 23 ທັນວາ 2020 ລາອອກນະວັນທີ 15 ສິງຫາ 2024
ທ່ານ ວິຈິດ ສຸວັນນະລາດ	ສະມາຊິກ	ແຕ່ງຕັ້ງນະວັນທີ 23 ທັນວາ 2020 ລາອອກນະວັນທີ 15 ກຸມພາ 2024
ທ່ານ ຫຼຸ ຫຼິນ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023 ລາອອກນະວັນທີ 3 ເມສາ 2024
ທ່ານ ວິຄຳແດງ ອິນທະໄຊ	ສະມາຊິກ	ແຕ່ງຕັ້ງນະວັນທີ 28 ສິງຫາ 2024

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງບໍລິສັດ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2024 ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມ ມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ເນັຍ ເຫຼຍ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຕິ໋ງ ຢຸ໋ຕິ໋ງ	ສະມາຊິກ	ແຕ່ງຕັ້ງນະວັນທີ 05 ພະຈິກ 2024
ທ່ານ ຈ່າງ ຈິ່ງຕົວ	ຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຄຳບົນ ໄຊເລົ່າວົງ	ຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 23 ມີຖຸນາ 2020
ທ່ານ ວິງວິຈິດ ແກ້ວວິງກິດ	ຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 23 ມີຖຸນາ 2020 ລາອອກນະວັນທີ 15 ສິງຫາ 2024
ທ່ານ ວິຈິດ ສຸວັນນະລາດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 23 ມີຖຸນາ 2020 ລາອອກນະວັນທີ 15 ກຸມພາ 2024
ທ່ານ ຫຼຸ ຫຼິນ	ຮອງຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 09 ມີນາ 2023 ລາອອກນະວັນທີ 03 ເມສາ 2024
ທ່ານ ເຊຍ ລຽງອຸ	ຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 09 ມີນາ 2023 ລາອອກນະວັນທີ 03 ເມສາ 2024

ຂໍ້ມູນທົ່ວໄປ (ຕ໋)

ຄະນະກຳມະການກວດສອບ

ສະມາຊິກຄະນະກຳມະການກວດສອບຂອງບໍລິສັດ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2024 ແລະ ນະວັນທີຂອງປົດລາຍງານສະບັບ ປົ໋ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ໄຕ ຫຼິງຫົວ	ປະທານ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຕ໋ຶ ເຊິ້ນຊູ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023 ລາອອກນະວັນທີ 05 ພະຈິກ 2024
ທ່ານ ວິງວິຈິດ ແກ້ວວິງກິດ	ສະມາຊິກ	ແຕ່ງຕັ້ງນະວັນທີ 23 ມີຖຸນາ 2020 ລາອອກນະວັນທີ 15 ສິງຫາ 2024
ທ່ານ ຫລີ ຣ໋ຳ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023

ຜູ້ຕາງໜ້າທາງດ້ານກົດໝາຍ

ຜູ້ຕາງໜ້າທາງດ້ານກົດໝາຍຂອງບໍລິສັດພາຍໃນປີ ແລະ ນະວັນທີອອກປົດລາຍງານສະບັບນີ້ ແມ່ນ ທ່ານ ເນັ໋ຍ ເຫຼີຍ ຜູ້ອຳນວຍການໃຫຍ່ ແລະ ປະທານສະພາບໍລິຫານ.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນ ແອນ ຢັ໋ງ ລາວ ຈຳກັດ.

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນລວມກິດຈະການຂອງບໍລິສັດ ແລະ ບໍລິສັດໃນເຄືອ (ລວມກັນເອີ້ນວ່າ "ກຸ່ມບໍລິສັດ") ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024. ("ເອກະສານລາຍງານການເງິນລວມກິດຈະການ").

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນລວມກິດຈະການ

ຄະນະອຳນວຍການມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນລວມກິດຈະການ ເຊິ່ງຖືກກະກຽມອີງຕາມນະໂຍບາຍການບັນຊີຕັ້ງທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນລວມກິດຈະການ. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງນຳສະເໜີຖານະການເງິນລວມກິດຈະການ, ຜົນຂອງການດຳເນີນງານລວມກິດຈະການ ແລະ ກະແສເງິນສົດລວມກິດຈະການຂອງກຸ່ມບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະລາຍງານການເງິນລວມກິດຈະການ, ຄະນະອຳນວຍການຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານຈະຕ້ອງຖືກເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນລວມກິດຈະການ; ແລະ
- ກະກຽມເອກະສານລາຍງານການເງິນລວມກິດຈະການບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ກຸ່ມບໍລິສັດຫາກຕັ້ງສົມມຸດຖານ ຫຼື ຄາດຄະເນວ່າກຸ່ມບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການມີໜ້າທີ່ຮັບປະກັນວ່າ ບັນດາຂໍ້ມູນການບັນຊີຫາງບັນຊີໄດ້ຖືກເປີດເຜີຍຖານະທາງການເງິນຂອງກຸ່ມບໍລິສັດຢ່າງສົມເຫດສົມຜົນຕະຫຼອດເວລາ, ກ່ຽວກັບຖານະທາງການເງິນລວມກິດຈະການຂອງກຸ່ມບໍລິສັດ ແລະ ຮັບປະກັນວ່າເອກະສານລາຍງານການເງິນ ລວມກິດຈະການແມ່ນສອດຄ່ອງກັບລະບຽບການບັນຊີທີ່ໄດ້ນຳໃຊ້, ຄະນະອຳນວຍການຂອງກຸ່ມບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຮັບສິນບັດຂອງກຸ່ມບໍລິສັດ ແລະ ຮັບປະກັນວ່າກຸ່ມບໍລິສັດເປີ້ນຕອນທີ່ສົມເຫດສົມຜົນໃນການປ້ອງກັນ ແລະ ຕົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການຢັ້ງຢືນວ່າ ໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງ ໃນການກະກຽມເອກະສານລາຍງານການເງິນລວມກິດຈະການ ສະບັບນີ້.

ຖະແຫຼງການຂອງຄະນະອຳນວຍການ

ຄະນະອຳນວຍການ ມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນ ລວມກິດຈະການແມ່ນໄດ້ກະກຽມຖືກຕ້ອງຕາມຄວາມເປັນຈິງ ສອດຄ່ອງກັບນະໂຍບາຍບັນຊີທີ່ລະບຸໄວ້ໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນ ລວມກິດຈະການ.

ໃນນາມຂອງຄະນະອຳນວຍການ:

ທ່ານ ເນີຍ ເຫຼີຍ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

ເລກທີ່ອ້າງອີງ: 11728747/E-68429455-ລວມກິດຈະການ

ບົດລາຍງານຂອງນັກກວດສອບອິດສະຫຼະ

ເຖິງ : ຜູ້ຖືຮຸ້ນຂອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ຫີນບຽ

ຄຳຕັກເຕືອນຍ້ອນຂາດຄຳຕັກ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບຄົບຖ້ວນເອກະສານລາຍງານການເງິນລວມກິດຈະການຂອງບໍລິສັດ ແລະ ບໍລິສັດໃນເຄືອ (ລວມກັນເອີ້ນວ່າ "ກຸ່ມບໍລິສັດ") ເຊິ່ງລວມມີ ໃບລາຍງານຖານະການເງິນລວມກິດຈະການ ນະວັນທີ 31 ທັນວາ 2024, ແລະ ໃບລາຍງານຜົນການດຳເນີນງານລວມກິດຈະການ, ໃບລາຍງານສ່ວນປ່ຽນແປງຫຶນເຈົ້າຂອງລວມກິດຈະການ ແລະ ໃບລາຍງານກະແສເງິນສົດລວມກິດຈະການ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ, ລວມທັງບົດສະຫຼຸບຂອງນະໂຍບາຍການບັນຊີທີ່ສຳຄັນ.

ເນື່ອງຈາກຄວາມສຳຄັນຂອງບັນຫາຕ່າງໆທີ່ໄດ້ອະທິບາຍໄວ້ໃນວັກພື້ນຖານໃນການບໍ່ສະແດງຄຳເຫັນ, ພວກຂ້າພະເຈົ້າບໍ່ສາມາດເກັບກຳຫຼັກຖານການກວດສອບທີ່ເໝາະສົມພຽງພໍເພື່ອເປັນພື້ນຖານໃຫ້ແກ່ການຍອມຮັບຄຳເຫັນສຳລັບການກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າບໍ່ໄດ້ສະແດງຄຳເຫັນຕໍ່ກັບເອກະສານລາຍງານການເງິນລວມກິດຈະການດັ່ງກ່າວ.

ພື້ນຖານໃນການຍອມຮັບຄຳເຫັນແບບບໍ່ສະແດງຄຳເຫັນ

ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນລວມກິດຈະການ, ກຸ່ມບໍລິສັດມີກຳໄລສຸດທິຈຳນວນ 7.94 ຕື້ກີບ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024. ນະວັນທີດັ່ງກ່າວ, ກຸ່ມບໍລິສັດ ມີຍອດຂາດທຶນສະສົມຈຳນວນ 84 ຕື້ກີບ ແລະ ມີໜີ້ສິນໝຸນວຽນຈຳນວນ 77.7 ຕື້ກີບ ເຊິ່ງເກີນມູນຄ່າຂອງຊັບສິນໝຸນວຽນຈຳນວນ 57.4 ຕື້ກີບ. ເງື່ອນໄຂເຫຼົ່ານີ້ບົ່ງຊີ້ໃຫ້ເຫັນເຖິງຄວາມບໍ່ແນ່ນອນທີ່ມີສາລະອັນສຳຄັນ ທີ່ເຮັດໃຫ້ເກີດຄວາມສົງໄສອັນໃຫຍ່ຫຼວງຕໍ່ຄວາມສາມາດຂອງກຸ່ມບໍລິສັດໃນການສືບຕໍ່ການດຳເນີນງານຕາມຫຼັກການແຫ່ງຄວາມສືບເນື່ອງ. ເອກະສານລາຍງານການເງິນລວມກິດຈະການ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024 ແມ່ນໄດ້ຖືກກະກຽມຍືນພື້ນຖານຫຼັກການແຫ່ງຄວາມສືບເນື່ອງ ໂດຍອີງຕາມຂໍ້ສົມມຸດຖານທີ່ວ່າກຸ່ມບໍລິສັດມີຊັບພະຍາກອນພຽງພໍ ໃນການຊຳລະໜີ້ສິນຂອງຕົນໃຫ້ກັບທາງຝ່າຍທະນາຄານ ແລະ ພຽງພໍສຳລັບສືບຕໍ່ດຳເນີນງານໃນປີຕໍ່ໄປ ໂດຍປາສະຈາກຂໍ້ຈຳກັດຕ່າງໆ. ຄະນະອຳນວຍການຂອງກຸ່ມບໍລິສັດໄດ້ກະກຽມການຄາດການກະແສເງິນສົດເພື່ອອອງຮັບການຊຳລະໜີ້ ແລະ ແຜນການດຳເນີນທຸລະກິດ, ໂດຍພິຈາລະນາຈາກຄວາມຄາດຫວັງທີ່ບໍ່ສາມາດໄດ້ຮັບການສະໜັບສະໜຸນຢ່າງເປັນທາງການຈາກຜູ້ຖືຮຸ້ນຂອງຕົນ ແລະ ມີຄວາມສາມາດໃນການຂາຍເຄື່ອງໃນສາງ. ຈາກຂໍ້ມູນທີ່ມີຢູ່ໃນປະຈຸບັນ, ພວກຂ້າພະເຈົ້າ ບໍ່ໄດ້ຮັບຫຼັກຖານທີ່ເໝາະສົມພຽງພໍເພື່ອຢັ້ງຢືນຂໍ້ສົມມຸດຖານຂອງຄະນະອຳນວຍການຂອງກຸ່ມບໍລິສັດ ໃນການກະກຽມການຄາດການກະແສເງິນສົດຂ້າງເທິງ. ດັ່ງນັ້ນ, ພວກຂ້າພະເຈົ້າຈຶ່ງບໍ່ສາມາດພິຈາລະນາຄວາມເໝາະສົມຂອງການນຳໃຊ້ຂໍ້ສົມມຸດຖານຫຼັກການແຫ່ງຄວາມສືບເນື່ອງ ໃນການກະກຽມເອກະສານລາຍງານການເງິນລວມກິດຈະການເຫຼົ່ານີ້ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024.

ບັນຫາທີ່ຄວນເອົາໃຈໃສ່

ນະໂຍບາຍບັນຊີ

ພວກຂ້າພະເຈົ້າ ຂໍເນັ້ນໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນລວມກິດຈະການ, ເຊິ່ງໄດ້ລະບຸກ່ຽວກັບນະໂຍບາຍການບັນຊີທີ່ຖືກນຳໃຊ້ໂດຍກຸ່ມບໍລິສັດ. ນະໂຍບາຍການບັນຊີເຫຼົ່ານີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນລວມກິດຈະການ ຫຼືການດຳເນີນງານລວມກິດຈະການ ແລະ ກະແສເງິນສົດລວມກິດຈະການກຸ່ມບໍລິສັດ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຖືຍອມຮັບໂດຍທົ່ວໄປ.

ບົດສະຫຼຸບຂອງກຸ່ມບໍລິສັດແມ່ນບັງບໍ່ໄດ້ດັດແກ້ໃນບັນຫານີ້

A member firm of Ernst & Young Global Limited

EY
Building a better working world

ຄວາມຮັບຜິດຊອບຂອງຄະນະອຳນວຍການ ແລະ ຜູ້ມີອຳນາດໃນການຄວບຄຸມ ຕໍ່ເອກະສານລາຍງານການເງິນລວມທີ່ໄດ້ຈະການ

ຄະນະອຳນວຍການຂອງກຸ່ມບໍລິສັດ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນລວມທີ່ໄດ້ຈະການ ຕາມນະໂຍບາຍການບັນຊີທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນລວມທີ່ໄດ້ຈະການ, ແລະ ບັນດາການຄວບຄຸມພາຍໃນຕາມທີ່ຄະນະອຳນວຍການເຫັນວ່າ ຈຳເປັນໃນການກະກຽມເອກະສານລາຍງານການເງິນລວມທີ່ໄດ້ຈະການ ໃຫ້ມີຄວາມຖືກຕ້ອງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນລວມທີ່ໄດ້ຈະການ, ຄະນະອຳນວຍການແມ່ນຮັບຜິດຊອບໃນການປະເມີນ ຄວາມສາມາດຂອງກຸ່ມບໍລິສັດດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເປີດເຜີຍບັນຫາຕ່າງໆທີ່ກ່ຽວກັບຄວາມສືບເນື່ອງຂອງການດຳເນີນທຸລະກິດ, ຫາກມີ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ, ເວັ້ນເສຍແຕ່ ທາງຄະນະອຳນວຍການ ມີຈຸດປະສົງຍຸບເລີກກຸ່ມບໍລິສັດ, ຫຼື ຍຸບເລີກກິດຈະການ ຫຼື ບໍ່ມີທາງເລືອກທີ່ດຳເນີນຕໍ່ໄປໄດ້ ແຕ່ຕ້ອງໄດ້ປະຕິບັດດັ່ງກ່າວ.

ຜູ້ມີອຳນາດໃນການຄວບຄຸມ ແມ່ນມີຄວາມຮັບຜິດຊອບໃນການ ກວດກາຂະບວນການລາຍງານການເງິນ ຂອງບໍລິສັດ.

ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບລາຍງານການເງິນລວມທີ່ໄດ້ຈະການ

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນເພື່ອດຳເນີນການກວດສອບເອກະສານລາຍງານການເງິນລວມທີ່ໄດ້ຈະການຂອງກຸ່ມບໍລິສັດ ໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ *(ISA)* ແລະ ການອອກບົດລາຍງານຂອງນັກກວດສອບບັນຊີ. ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກຄວາມສ່ຳຄັນຂອງບັນຫາທີ່ໄດ້ລະຫັດຍໃນສ່ວນ *ພື້ນຖານໃນການບໍ່ສະແດງຄຳຄິດເຫັນ* ໃນບົດລາຍງານຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າບໍ່ສາມາດເກັບກຳຫຼັກຖານການກວດສອບທີ່ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄຳຄິດເຫັນຂອງເອກະສານລາຍງານການເງິນລວມທີ່ໄດ້ຈະການສະບັບນີ້.

ພວກຂ້າພະເຈົ້າ ແມ່ນມີຄວາມເປັນເອກະລາດຈາກກຸ່ມບໍລິສັດ ໂດຍສອດຄ່ອງກັບກົດຈັນຍາບັນຂອງນັກວິຊາຊີບການບັນຊີ ທີ່ອອກໂດຍສະພາຄຸ້ມຄອງມາດຕະຖານຈັນຍາບັນຂອງນັກບັນຊີສາກົນ (ລວມທັງມາດຕະຖານສາກົນດ້ານການເປັນເອກະລາດ)(IESBA Code) ແລະ ບັນດາຫຼັກຈັນຍາບັນອື່ນໆທີ່ກ່ຽວຂ້ອງ ເຂົ້າໃນການກວດສອບເອກະສານລາຍງານການເງິນໃນ ສປປ ລາວ, ແລະ ພວກຂ້າພະເຈົ້າບັງໄດ້ປະຕິບັດ ຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ທີ່ກ່ຽວຂ້ອງກັບເງື່ອນໄຂດັ່ງກ່າວ ແລະ ກົດລະບຽບຂອງສະພາວິຊາຊີບ.

ຕາງໜ້າ ແລະ ໃນນາມບໍລິສັດ ເອີ ແອນ ຢັ ງ ລາວ ຈຳກັດ

ການ
ບໍລິສັດ
ເອີ ແອນ ຢັ ງ ລາວ
ຈຳກັດ
Ernst & Young Lao Co., Ltd

ວັນ ເລ
ຜູ້ນຳສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

A member firm of Ernst & Young Global Limited

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ
ນະວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	31 ທັນວາ 2024 ກີບ	31 ທັນວາ 2023 ກີບ
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນ, ອາຄານ ແລະ ອຸປະກອນ	4	1,181,534,317	1,087,455,166
ຊັບສິນພວມກໍ່ສ້າງ	6	33,099,471,597	33,848,808,652
ຊັບສິນບັດຕົ້ງທີ່ບໍ່ມີຕົວຕົນ	5	3,698,058,835	3,689,043,755
ລວມຊັບສິນບໍ່ໝຸນວຽນ		**37,979,064,749**	**38,625,307,573**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	7	4,755,554,770	1,783,127,243
ເຄື່ອງໃນສາງ	8	12,324,012,453	6,880,835,715
ໜີ້ຕ້ອງຮັບທາງການຄ້າ	9	1,000,000,000	-
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ	22	1,656,111,790	2,464,105,715
ເງິນສົດ	10	644,185,612	1,626,190,316
ລວມຊັບສິນໝຸນວຽນ		**20,379,864,625**	**12,754,258,989**
ລວມຊັບສິນທັງໝົດ		**58,358,929,374**	**51,379,566,562**

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ (ຕໍ່)
ນະວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	31 ທັນວາ 2024 ກີບ	31 ທັນວາ 2023 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງຮັ່ງການຄ້າ	11	8,025,747,856	1,441,398,721
ເງິນລ່ວງໜ້າຈາກລູກຄ້າ	12	12,440,807,689	20,274,717,670
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ຍືນຫົ້ນຮ່ວມຂ້ອງ	22	11,567,018,084	8,389,384,462
ພັນທະລາຍຮອບ	13	8,327,444,701	6,119,062,956
ໜີ້ຕ້ອງສົ່ງໃຫ້ພະນັກງານ		12,131,161,070	8,274,569,469
ໜີ້ຕ້ອງສົ່ງອື່ນໆ	14	25,297,650,701	18,365,413,842
ລວມໜີ້ສິນໝຸນວຽນ		**77,789,830,101**	**62,864,547,120**
ລວມໜີ້ສິນທັ້ງໝົດ		**77,789,830,101**	**62,864,547,120**
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກຮຸ້ນລ້ວ	15	20,002,000,000	20,002,000,000
ມູນຄ່າຮຸ້ນ		18,385,975,511	18,385,975,511
ຖ້ຽຄ້ຳຂອງຕາມລະບຽບການ		7,704,052,546	7,704,052,546
ຖ້ຽຄ້ຳຂອງເພື່ອຂະຫຍາຍອາຄານ		18,549,465,596	18,549,465,596
ຂາດທຶນສະສົມ		(84,072,394,380)	(76,126,474,211)
ລວມທຶນ		**(19,430,900,727)**	**(11,484,980,558)**
ລວມໜີ້ສິນ ແລະ ທຶນທັ້ງໝົດ		**58,358,929,374**	**51,379,566,562**

ເນັຍ ເຫຼຶຍ

ທ່ານ ເນັຍ ເຫຼຶຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່ານ ຈິ້ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ກຸ່ມບໍລິສັດ ຫ່ອງຫ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

	ຄຳອະທິບາຍ ເລກທີ	2024 ກີບ	2023 ກີບ
ລາຍຮັບຈາກການຂາຍສິນຄ້າ		-	-
ຕົ້ນທຶນຈາກການຂາຍ		-	-
ກຳໄລຂັ້ນຕົ້ນ		-	-
ລາຍໄດ້ຈາກການດຳເນີນງານອື່ນໆ	16	17,681,203,801	24,108,787,955
ລາຍຈ່າຍຈາກການດຳເນີນງານອື່ນໆ	17	(3,690,754,872)	(10,344,341,944)
ລາຍຈ່າຍໃນການບໍລິຫານ	18	(22,329,606,896)	(11,340,355,020)
ຂາດທຶນຈາກການດຳເນີນງານ		**(8,339,157,967)**	**2,424,090,991**
			-
ລາຍຮັບທາງການເງິນ	19	393,237,798	8,228,373
ຕົ້ນທຶນທາງການເງິນ	20	-	(1,677,310,525)
ຂາດທຶນກ່ອນອາກອນ		**(7,945,920,169)**	**755,008,839**
ລາຍຈ່າຍອາກອນກຳໄລ	21	-	-
ຂາດທຶນສຸດທິຫຼັງອາກອນຂາຍໃນປີ		**(7,945,920,169)**	**755,008,839**

ທ່ານ ເນັ່ຍເຫຼ່ຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ້ງຕົ໋ວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

	ທຶນຈົດທະບຽນທີ່ເກັບຄອກແລ້ວ *ກີບ*	*ຫຸ້ນສ່ວນ* *ກີບ*	*ກຳໄລສະສົມ ແລະ ປັນຜົນ* *ກີບ*	*ກຳໄລສະສົມເພື່ອ ຂະຫຍາຍທຶນ* *ກີບ*	*ຂາດທຶນສະສົມ* *ກີບ*	*ລວມທັງໝົດ* *ກີບ*
ນະວັນທີ 1 ມັງກອນ 2023	20,002,000,000	18,385,975,511	7,704,052,546	18,549,465,596	(76,881,483,050)	(12,239,989,397)
ຂາດທຶນສຸດທິພາຍໃນປີ	-	-	-	-	755,008,839	755,008,839
ນະວັນທີ 31 ທັນວາ 2023	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(76,126,474,211)**	**(11,484,980,558)**
ນະວັນທີ 1 ມັງກອນ 2024	20,002,000,000	18,385,975,511	7,704,052,546	18,549,465,596	(76,126,474,211)	(11,484,980,558)
ຂາດທຶນສຸດທິພາຍໃນປີ	-	-	-	-	(7,945,920,169)	(7,945,920,169)
ນະວັນທີ 31 ທັນວາ 2024	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(84,072,394,380)**	**(19,430,900,727)**

ທ່ານ ເນັຍ ເຫຼັ້ຍ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ທ່ານ ຈ່ຳ ຈ້ຽຫົວ
ຫົວໜ້າບັນຊີ ແລະ ການເງິນ

	ບົດອະທິບາຍ ເລກທີ	2024 ກີບ	2023 ກີບ
ກິດຈະກຳການດຳເນີນງານ			
(ຂາດທຶນ)/ກຳໄລກ່ອນອາກອນ		**(7,945,920,169)**	**755,008,839**
ດັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ	4,5	523,787,906	3,026,514,300
ເກັບຄືນເງິນແຂ່ສຳລັບເຄື່ອງໃນສາງ	16	(8,723,578)	(610,550,245)
ເກັບຄືນເງິນແຂ່ສຳລັບໜີ້ຫລວຍຫາ	16	(49,416,000)	(7,650,143,450)
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(130,762,344)	1,217,159,590
ກຳໄລຈາກການຂາຍຊັບສິນ		(5,257,532,441)	(8,794,535,894)
ການດັດແກ້ໃນທຶນໝຸນວຽນ:			
ຫຼຸດລົງຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບ ອື່ນໆ, ລວມທັງຈ່າຍລວນໜີ້ຄ້າງຊຳລະຈາຍາກສ່ວນ ທີ່ກ່ຽວຂ້ອງ		(126,925,548)	(222,082,236)
ເພີ່ມຂຶ້ນຂອງຊັບສິນໝຸນວຽນອື່ນໆ		(3,188,222,341)	(1,665,724,036)
(ເພີ່ມຂຶ້ນ)/ຫຼຸດລົງຂອງເຄື່ອງໃນສາງ		(5,434,453,160)	4,598,562,382
ເພີ່ມຂຶ້ນຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງ ສົ່ງອື່ນໆ, ລວມທັງຈ່າຍລວນໜີ້ຄ້າງຊຳລະໃຫ້ ພາກສ່ວນທີ່ກ່ຽວຂ້ອງ		18,284,298,172	23,756,360,128
ລາຍຮັບດອກເບ້ຍ		68,262	8,138,373
ອາກອນກຳໄລທີ່ຈ່າຍແທ້ໃນປີ		-	-
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳການດຳ ເນີນງານ		**(3,333,801,241)**	**14,418,707,751**
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(620,602,137)	(22,420,000)
ເງິນສົດຈາກການຂາຍຊັບສິນປົດຄົງທີ		5,270,692,440	8,850,060,594
ການຈັດຊື້ຊັບສິນທີ່ບໍ່ມີຕົວຕົນ		(19,440,000)	(3,273,189,600)
ຊັບສິນໝວນກ່ຳລ້ຳ		(2,277,160,533)	(19,006,976,169)
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ		**2,353,489,770**	**(13,452,525,175)**

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

ໃນລາຍງານກະແສເງິນສົດລວມກິດຈະການ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	2024 ກີບ	2023 ກີບ
ເງິນສົດສຸດທິຈາກ		(980,311,471)	966,182,576
ເງິນສົດເຂົ້າໃນໄລຍະ		1,626,190,316	643,463,066
ຜົນກະທົບຈາກຄວາມຕົ້ນຕ່ອນຂອງອັດຕາແລກປ່ຽນ		(1,693,233)	16,544,674
ເງິນສົດໃນຕົ້ນປີ	**10**	**644,185,612**	**1,626,190,316**

ທ່ານ ເນ້ຍ ເຫຼ່ຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈຶ້ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

1. ຂໍ້ມູນບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ("ບໍລິສັດ") ຊື່ເດີມແມ່ນ ບໍລິສັດ ຊິມັ່ງລາວ ມະຫາຊົນ ແລະ ບໍລິສັດ ຊິມັ່ງ ລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຂັ້ນລອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນ ທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ກັບ ບໍລິສັດ ຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ.

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຕັ້ງຫ້າຫົວເລກທີ 1154/ຈຫກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການ ຄ້າ, ເຊິ່ງບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊິມັ່ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊິມັ່ງເພື່ອການ ຈຳໜ່າຍພາຍໃນ ແລະ ສົ່ງອອກ.

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໃບຢັ້ງຢືນການສະເໜີຂາຍຫຼັກຊັບຄັ້ງທຳອິດເລກທີ 0008/ຕລຊ ອອກ ໂດຍ ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຫຼັກຊັບຕໍ່ສາທາລະນະ ໂດຍມີຫຸ້ນຂອງບໍລິສັດ ຈຳນວນ 40,004,000 ຫຸ້ນ (ພາຍໃຕ້ຊື່ຫຍໍ້ "LCTC") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວ.

ວັນທີ 20 ກຸມພາ 2018, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດ ເລກທີ 0160/ຈຫລ ສຳຫຼັບ ການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊິມັ່ງລາວ ຈຳກັດ ມາເປັນ ບໍລິສັດ ຊິມັ່ງລາວ ມະຫາຊົນ.

ວັນທີ 2 ພຶດສະພາ 2023, ບໍລິສັດໄດ້ຮັບໃບອະນຸຍາດວິທີນສະບັບໃໝ່ ເລກທີ 119.2023/ກຊທ, ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນ ເຊິ່ງປ່ຽນແປງກິດຈະກຳຫຼັກທາງທຸລະກິດຂອງບໍລິສັດ. ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກ ການຜະລິດ, ການຂາຍສົ່ງ ແລະ ການຂາຍບ່ອຍຊິມັ່ງ ແລະ ຜະລິດຕະພັນຊິມັ່ງອື່ນໆທີ່ກ່ຽວຂ້ອງ ມາເປັນການໃຫ້ບໍລິການ ການທ່ອງທ່ຽວ (ພາຍໃນ ແລະ ຕ່າງປະເທດ) ແລະ ການກໍ່ສ້າງຕຶກອາຄານຄອນໂດຂາຍ/ຈຳໜ່າຍ.

ວັນທີ 31 ຕຸລາ 2023, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດ ເລກທີ 3331/ຈຫລ ສຳຫຼັບ ການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊິມັ່ງລາວ ມະຫາຊົນ ມາເປັນ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານໂພນທະເນົ່າ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊິມັ່ງວັງວຽງ ຫຼັງ 2 ຢູ່ເມືອງວັງວຽງ, ແຂວງ ວຽງຈັນ, ສປປ ລາວ.

ນະວັນທີ 31 ທັນວາ 2024, ບໍລິສັດມີພະນັກງານ 72 ຄົນ (31 ທັນວາ 2023: ພະນັກງານ 52 ຄົນ)

1. **ຂໍ້ມູນບໍລິສັດ** (ຕໍ່)

ໂຄງສ້າງການຈັດຕັ້ງຂອງບໍລິສັດ

ນະວັນທີ 31 ທັນວາ 2024, ບໍລິສັດມີບໍລິສັດໃນເຄືອ 8 ບໍລິສັດຍ່ອຍທີ່ມີຂໍ້ມູນທາງການເງິນດັ່ງນີ້:

ຊື່ບໍລິສັດ	*ໃບທະບຽນວິສາຫະກິດເລກທີ*	*ປະເພດກິດຈະກິດ*	*% ເປັນເຈົ້າຂອງໂດຍ LCTC*
ບໍລິສັດ ພັດທະນາກະສິກຳ ວິທະຍາສາດ ແລະ ເຕັກໂນໂລຊີ ລາວ ຈຳກັດຜູ້ດຽວ	ເລກທີ 2118/ຈຫວ ລົງວັນທີ 17 ທັນວາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ການຈຳໜ່າຍພືດສະໝຸນໄພເພື່ອສົ່ງອອກ, ປູກເພື່ອຂະຫຍາຍພັນໃນ ແລະ ສົ່ງອອກ	100%
ບໍລິສັດ ກໍ່ສ້າງ ພັດທະນາ ຄິວເມືອງລາວ ຈຳກັດຜູ້ດຽວ	ເລກທີ 2434/ຈຫວ ລົງວັນທີ 05 ກໍລະກົດ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ການບໍລິການທີ່ປຶກສາດ້ານການກໍ່ສ້າງ	100%
ບໍລິສັດ ວັດສະດຸກໍ່ສ້າງໃໝ່ລາວ ຈຳກັດຜູ້ດຽວ	ເລກທີ 2422/ຈຫວ ລົງວັນທີ 10 ສິງຫາ 2023 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ວັດສະດຸການກໍ່ສ້າງ ແລະ ເຄື່ອງມືອຸປະກອນ	100%
ບໍລິສັດ ສະຖາປັນແນວການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ	ເລກທີ 3113/ຈຫວ ລົງວັນທີ 26 ກັນຍາ 2023 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການອອກແບບອາຄານ, ການອອກແບບການທ່ອງທ່ຽວ, ອອກແບບ ແລະ ກໍ່ສ້າງວຽກງານສາທາລະນະ	100%
ບໍລິສັດ ບໍລິການວາງສະແດງສາກົນລາວ ຈຳກັດຜູ້ດຽວ	ເລກທີ 0414/ຈຫວ ລົງວັນທີ 01 ກຸມພາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ການຈະລຶດສີບັນເທີງ, ອຸບເງົາ ແລະ ການໂຄສະນາ	100%
ບໍລິສັດ ພັດທະນາຊັບພະຍາກອນແຮ່ລາວ ຈຳກັດ	ເລກທີ 0767/ຈຫວ ລົງວັນທີ 29 ກຸມພາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຂຸດຄົ້ນ ແລະ ສຳຫຼວດພື້ນທີ່ຂຸດຄົ້ນບໍ່ແຮ່	100%
ບໍລິສັດ ສະຖາປັນສຳຫຼວດ ແລະ ອອກແບບແຫ່ງຊາດລາວ ຈຳກັດຜູ້ດຽວ	ເລກທີ 1495/ຈຫວ ລົງວັນທີ 06 ພຶດສະພາ 2024 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.	ການສຳຫຼວດ ແລະ ການອອກແບບອາຄານ	100%
ບໍລິສັດ ສູນຝຶກອົບຮົມ ແລະ ການສຶກສາ (ລາວ) ຈຳກັດຜູ້ດຽວ	ເລກທີ 1485/ຈຫວ ລົງວັນທີ 06 ພຶດສະພາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການທີ່ປຶກສາທາງດ້ານການສຶກສາ	100%

2. ພື້ນຖານຂອງການກະກຽມ

ອີງຕາມກົດໝາຍວ່າດ້ວຍບັນຊີ ສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາໜ່ວຍງານລາຍງານລະບະປະໂຫຍດ ລວມທັງບໍລິສັດຈົດທະບຽນຄວນນຳໃຊ້ມາດຕະຖານການລາຍງານການເງິນສາກົນ ("IFRS") ໃນການກະກຽມລາຍງານການເງິນປະຈຳປີ, ເລີ່ມແຕ່ປີ 2017. ອີງຕາມຈົດໝາຍເຫດທາງລັດຖະການ. ສະບັບເລກທີ 1137/ສພຊ, ລົງວັນທີ 27 ເມສາ 2020 ໂດຍກະຊວງການເງິນ, ຫົວໜ່ວຍຖືຜົນປະໂຫຍດລາຫາລະບະ ໄດ້ອະນຸຍາດໃຫ້ເລື່ອນເວລາການສະໝັກ IFRS ໄປຈົນເຖິງວັນທີ 1 ມັງກອນ 2026.

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024, ກຸ່ມບໍລິສັດ ແມ່ນໄດ້ກະກຽມເອກະສານລາຍງານການເງິນລວມກິດຈະການໂດຍສອດຄ່ອງກັບນະໂຍບາຍການບັນຊີເຊິ່ງໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນລວມກິດຈະການ. ນະໂຍບາຍການບັນຊີດັ່ງກ່າວບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖານະການເງິນລວມກິດຈະການ, ຜົນຂອງການດຳເນີນງານລວມກິດຈະການ ແລະ ກະແສເງິນສົດລວມກິດຈະການຂອງກຸ່ມບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບທົ່ວໄປ.

ເອກະສານລາຍງານການເງິນລວມກິດຈະການຂອງກຸ່ມບໍລິສັດ ແມ່ນໄດ້ຖືກກະກຽມໂດຍນຳໃຊ້ຫຼັກການຕົ້ນທຶນເດີມ. ເອກະສານລາຍງານການເງິນລວມກິດຈະການ ສະບັບນີ້ ແມ່ນຖືກລາຍງານເປັນສະກຸນເງິນກີບລາວ ("ກີບ"). ເຊິ່ງເປັນສະກຸນເງິນຫຼັກທີ່ນຳໃຊ້ໃນການຄ້ຳຫຼຸລະກຳ ແລະ ລຳລະສະສາງຂອງກຸ່ມບໍລິສັດ.

ນະວັນທີ 31 ທັນວາ 2024, ອັດຕາເງິນເຟີ້ສະສົມຂອງ ສປປ ລາວ ໃນໄລຍະ 36 ເດືອນທີ່ຜ່ານມາສູງກວ່າ 100%, ເຊິ່ງຈັດຢູ່ໃນກຸ່ມປະເທດທີ່ເສດຖະກິດມີພາວະອັດຕາເງິນເຟີ້ລະດັບສູງສຸດ ອີງຕາມການລາຍງານຈາກເວັບໄຊ້ຂອງທະນາຄານແຫ່ງ ສປປ ລາວ (www.bol.gov.la.com). ເຖິງຢ່າງໃດກໍຕາມ, ບໍລິສັດຍັງບໍ່ທັນປະຕິບັດນະໂຍບາຍການບັນຊີໃດໆ ຕໍ່ກັບຜົນກະທົບຈາກພາວະອັດຕາເງິນເຟີ້ລະດັບສູງສຸດ ເນື່ອງຈາກຍັງບໍ່ມີຄຳແນະນຳສະເພາະຈາກກະຊວງການເງິນ ຕໍ່ກັບຍັນຫາດັ່ງກ່າວ

ພື້ນຖານການລວມກິດຈະການ

ເອກະສານລາຍງານການເງິນລວມກິດຈະການ ມີລາຍງານການເງິນຂອງກຸ່ມບໍລິສັດ ແລະ ບໍລິສັດໃນເຄືອສຳລັບປີທີ່ປີສິ້ນສຸດ ວັນທີ 31 ທັນວາ 2024.

ບໍລິສັດໃນເຄືອແມ່ນໄດ້ຖືກລວມກິດຈະການຍົກມູນທັງໝົດນັບຈາກມື້ທີ່ໄດ້ມາຂອງຍົກມູນ, ເປັນມື້ທີ່ກຸ່ມບໍລິສັດຢູ່ພາຍໃຕ້ການຄວບຄຸມ ແລະ ສືບຕໍ່ລວມກິດຈະການຈົນເຖິງມື້ທີ່ສິ້ນສຸດການຄວບຄຸມ.

ເອກະສານລາຍງານການເງິນຂອງບໍລິສັດໃນເຄືອແມ່ນຖືກກະກຽມພາຍໃຕ້ປີການບັນຊີອັນດຽວກັນກັບບໍລິສັດແມ່, ໂດຍການນຳໃຊ້ນະໂຍບາຍການບັນຊີທີ່ສອດຄ່ອງກັນ.

ຍອດຖືລອຍພາຍໃນກຸ່ມທັງໝົດ, ລາຍຮັບ ແລະ ລາຍຈ່າຍ ແລະ ກຳໄລ ຫຼື ຂາດທຶນທີ່ຍັງບໍ່ທັນເກີດຂຶ້ນຈິງ ທີ່ມີຜົນຈາກລາຍການທີ່ກ່ຽວຂ້ອງກັນພາຍໃນກຸ່ມແມ່ນຈະຖືກຕັດຖອກທັງໝົດ.

ບໍລິສັດທີ່ບໍ່ໄດ້ຖືກຄວບຄຸມໂດຍບໍລິສັດແມ່ແມ່ນຈະນຳສະເໜີຜົນກຳໄລ/ຂາດທຶນ ແລະ ຊັບສິນສຸດທິທີ່ບໍ່ໄດ້ຖືດອງໂດຍກຸ່ມບໍລິສັດ ແລະ ຖືກນຳສະເໜີແຍກຕ່າງຫາກໃນໃບລາຍງານຜົນການດຳເນີນງານລວມກິດຈະການ ແລະ ໜີ້ນໃນໃບລາຍງານຖານະການເງິນລວມກິດຈະການ, ແຍກຈາກສ່ວນຂອງຜູ້ຖືຮຸ້ນຂອງບໍລິສັດແມ່.

ຜົນກະທົບຈາກສ່ວນປ່ຽນແປງຄວາມເປັນເຈົ້າຂອງໃນບໍລິສັດໃນເຄືອໂດຍທີ່ບໍ່ໄດ້ສູນເສຍການຄວບຄຸມແມ່ນຈະຖືກບັນທຶກເປັນທຸລະກຳຂອງກິດຈະການ.

2. ພື້ນຖານຂອງການກະກຽມ (ຕໍ່)

ຂໍ້ສົມມຸດຖານກ່ຽວກັບຄວາມສົມເຫດສົມຜົນຂອງການດຳເນີນທຸລະກິດ

ກຸ່ມບໍລິສັດໄດ້ຂາດທຶນສຸດທິມູນຄ່າ 7.94 ຕື້ກີບ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024. ນະວັນທີດັ່ງກ່າວ, ກຸ່ມບໍລິສັດມີຍອດຂາດທຶນສະສົມມູນຄ່າ 84 ຕື້ກີບ ເກີນທຶນຈົດທະບຽນທີ່ຈັດສັນໄວ້ 64 ຕື້ກີບ, ແລະ ໜີ້ສິນໝຸນວຽນຂອງກຸ່ມບໍລິສັດ ຫຼາຍກວ່າຊັບສິນໝຸນວຽນ 57.4 ຕື້ກີບ. ໃນວັນທີ 25 ສິງຫາ 2020, ກຸ່ມບໍລິສັດໄດ້ອອກແຈ້ງການເລກທີ 202/ບຊລ ກ່ຽວກັບການປຸດຜະລິດຊົ່ວຄາວຈົນເຖິງການແຈ້ງການຄັ້ງຕໍ່ໄປ. ກຸ່ມບໍລິສັດໄດ້ປັບປຸງແກ້ໄຂການເຄື່ອນໄຫວທຸລະກິດຕົ້ນຕໍໃຫ້ສອດຄ່ອງກັບໃບອະນຸຍາດການລົງທຶນສະບັບເລກທີ 119.2023/ກຜທ ລົງວັນທີ 02 ຕຸລາສະຫນ 2023 ອອກໂດຍກະຊວງແຜນການ ແລະ ການລົງທຶນ. ກິດຈະກຳຫຼັກຂອງກຸ່ມບໍລິສັດໄດ້ປ່ຽນຈາກການຜະລິດ, ການຂາຍສົ່ງ ແລະ ການຂາຍປ່ອຍຊິມັງ ແລະ ຜະລິດຕະພັນຊີມັງອື່ນໆທີ່ກ່ຽວຂ້ອງ ມາເປັນການໃຫ້ບໍລິການການທ່ອງທ່ຽວ (ພາຍໃນ ແລະ ຕ່າງປະເທດ) ແລະ ການກໍ່ສ້າງຕຶກອາຄານຄອນໂດສຳລັບຈຳໜ່າຍ. ເງື່ອນໄຂດັ່ງກ່າວນີ້ໄດ້ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນ ເຊິ່ງອາດເກີດການສົງໄສຢ່າງໃຫຍ່ຫຼວງກ່ຽວກັບຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດຂອງກຸ່ມບໍລິສັດ.

ຄະນະອຳນວຍການຂອງກຸ່ມບໍລິສັດໄດ້ກະກຽມການຄາດຄະເນກະແສເງິນສົດເພື່ອສະໜັບສະໜຸນການຕັກລ້ຽງ ແລະ ແຜນການດຳເນີນງານ ໂດຍອີງໃສ່ບົນພື້ນຖານຄວາມຄາດຫວັງຄວາມສາມາດໃນການຮັບເງິນການຂາຍຊັບສິນຈາກການສະໜັບສະໜຸນທາງການເງິນຂອງຜູ້ຖືຮຸ້ນ. ຜູ້ບໍລິຫານຂອງບໍລິສັດໄດ້ຮັບເອກະສານສະໜັບສະໜຸນທາງການເງິນຈາກປຸນບານເທິງຊີ ເຊິ່ງເປັນຜູ້ຖືຮຸ້ນລາຍໃຫຍ່ເຊິ່ງໄດ້ກຳນົດໃນຂໍ້ຕົກລົງໃນການສະໜອງການຊ່ວຍເຫຼືອທາງການເງິນໃຫ້ມີຄວາມພຽງພໍຕໍ່ການສະສາງໜີ້ສິນເມື່ອຄົບກຳນົດໃນການຊຳລະໃນປີຕໍ່ໄປໂດຍບໍ່ມີການຫຼຸດຜ່ອນ. ບົນພື້ນຖານນີ້, ຄະນະອຳນວຍການຂອງກຸ່ມບໍລິສັດຍັງຄົງພິຈາລະນາຄວາມເໝາະສົມທີ່ກະກຽມເອກະສານລາຍງານການເງິນລວມກິດຈະການຂອງກຸ່ມບໍລິສັດບົນພື້ນຖານຄວາມສືບເນື່ອງຂອງການດຳເນີນທຸລະກິດ.

ອີງຕາມເອກະສານລາຍງານການເງິນລວມກິດຈະການຈະບໍ່ລວມການດັດແກ້ໃດໆທີ່ອາດຈະຈຳເປັນ ຫາກວ່າກຸ່ມບໍລິສັດບໍ່ມີຄວາມສາມາດໃນການສືບເນື່ອງຂອງການດຳເນີນທຸລະກິດ.

ປີການບັນຊີ

ປີການບັນຊີຂອງກຸ່ມບໍລິສັດແມ່ນ ເລີ່ມຈາກ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ຊັບສິນ, ອາຄານ ແລະ ອຸປະກອນ

ຊັບສິນ, ອາຄານ ແລະ ອຸປະກອນແມ່ນບັນທຶກຕາມມູນຄ່າຕົ້ນທຶນຫັກລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ.

ຕົ້ນທຶນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ໂດຍກຸ່ມບໍລິສັດ ເຊິ່ງປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ກ່ຽວພັນໂດຍກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນໃຫ້ຢູ່ໃນສະພາບທີ່ສາມາດໃຊ້ງານຕາມຈຸດປະສົງຂອງການນຳໃຊ້. ລາຍຈ່າຍສຳລັບການເພີ່ມເຕີມ, ການປັບປຸງ ແລະ ການຟື້ນຟູແມ່ນບັນທຶກເຂົ້າໃນມູນຄ່າຕົ້ນທຶນໃນຂະນະທີ່ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານລວມກິດຈະການ.

ເມື່ອຂາຍການຂອງຊັບສິນ, ອາຄານ ແລະ ອຸປະກອນໄດ້ຖືກຂາຍ ຫຼື ສະລາງ, ຕົ້ນທຶນ ແລະ ຄ່າຫຼຸ້ຍຫ້ຽນສະສົມ ແມ່ນຈະຖືກຕັດອອກຈາກໃນລາຍງານຖານະການເງິນລວມກິດຈະການກິດຈະການ ແລະ ທຸກໆກຳໄລ ຫຼື ຂາດທຶນຈາກການສະລາງ ແມ່ນຈະຖືກລວມຢູ່ໃນລາຍຮັບການດຳເນີນງານອື່ນໆ ຫຼື ບັນຊີລາຍຈ່າຍ ໃນໃບລາຍງານຜົນການດຳເນີນງານລວມກິດຈະການຕາມລຳດັບ.

ຊັບສິນພວມກໍ່ສ້າງ ສະແດງເຖິງຊັບສິນພາຍໃຕ້ການກໍ່ສ້າງ ເຊິ່ງປະກອບມີຄ່າໃຊ້ຈ່າຍໃນການກໍ່ສ້າງ ແລະ ຄ່າໃຊ້ຈ່າຍໂດຍກົງອື່ນໆ.

ຊັບສິນ, ອາຄານ ແລະ ອຸປະກອນ ທີ່ຖືກຫັກຄ່າຫຼຸ້ຍຫ້ຽນໝົດຕາມອາຍຸການນຳໃຊ້ຈະຖືກເກັບຮັກສາໄວ້ໃນບັນຊີ ຈົນກວ່າຈະບໍ່ມີການນຳໃຊ້ ແລະ ຈະບໍ່ມີຄ່າຫຼຸ້ຍຫ້ຽນທີ່ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານລວມກິດຈະການອີກ.

ຄ່າຫຼຸ້ຍຫ້ຽນ

ຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນແມ່ນນຳໃຊ້ວິທີຄິດໄລ່ແບບສະເໝີຕົ້ນຕາມອາຍຸການນຳໃຊ້ຂອງຊັບສິນແຕ່ລະປະເພດດັ່ງນີ້:

ອາຄານ ແລະ ສິ່ງປຸກສ້າງ	5 ຫາ 20 ປີ
ເຄື່ອງຈັກ ແລະ ອຸປະກອນ	5 ປີ
ພາຫະນະຂົນສົ່ງ	5 ປີ
ການປັບປຸງສິດທິໃນການເຊົ່າ	5 ຫາ 10 ປີ
ເຄື່ອງໃຊ້ຫ້ອງການ	5 ຫາ 10 ປີ
ອື່ນໆ	10 ປີ

ອາຍຸການໃຊ້ງານຂອງຊັບສິນເຊົ່າພວມປັບປຸງ ແມ່ນຖືກກຳນົດໂດຍການຄາດການຄວາມຄາດຄະເນອຳນວຍການກ່ຽວກັບການໃຊ້ງານ ແລະ ອາດຈະແຕກຕ່າງກັບໄລຍະເວລາຂອງສັນຍາ.

ການຫັກຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ເພີ່ມ ຫຼື ສະລາງອອກພາຍໃນປີ ແມ່ນຄິດໄລ່ອີງຕາມສັດສ່ວນໄລຍະເວລາໃນການນຳໃຊ້ນັບແຕ່ມື້ທີ່ເລີ່ມຕົ້ນນຳໃຊ້ ແລະ ມື້ທີ່ສະລາງອອກຕົວຈິງ. ບໍ່ມີການຫັກຄ່າຫຼຸ້ຍຫ້ຽນສຳລັບຊັບສິນພວມກໍ່ສ້າງຈົນກວ່າຈະເຖິງເວລາທີ່ຊັບສິນດັ່ງກ່າວສຳເລັດ ແລະ ຖືກນຳໃຊ້.

ຊັບສິນບົດລົງທີ່ບໍ່ມີຕົວຕົນ

